# Curriculum on Basic Skills in legal profession
# for enforcement and court judgement (Laos)

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 8
## General knowledge on enforcement and court judgement
## ຄວາມຮູ້ທົ່ວໄປກ່ຽວກັບວຽກງານປະຕິບັດຄຳຕັດສິນຂອງສານ

### 1. ຄວາມຮັບຮູ້ທົ່ວໄປກ່ຽວກັບການປະຕິບັດຄຳຕັດສິນຂອງສານ

ການປະຕິບັດຄຳຕັດສິນຂອງສານ ແມ່ນວຽກງານສຸດທ້າຍຂອງການດຳເນີນຄະດີຕາມຂະບວນຍຸຕິທຳ ໂດຍມີອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ ຮັບຜິດຊອບໃນການຈັດຕັ້ງ ແລະ ການເຄື່ອນໄຫວໃຫ້ເປັນໄປຕາມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ວຽກງານດັ່ງກ່າວເປັນວຽກງານທີ່ລະອຽດອ່ອນ, ເຂັ້ມງວດ ແລະ ເດັດຂາດ, ມີຄວາມຈຳເປັນຕ້ອງເຂົ້າໃຈໃຫ້ເລິກເຊິ່ງໃນທາງກ້ວາງ ແລະ ທາງເລິກຕາມທິດສະດີການເມືອງ ແລະ ທິດສະດີທາງກົດໝາຍດັ່ງນີ້[1]:

- ພວກເຮົາບໍ່ຄວນເຂົ້າໃຈແບບແຂງກະດ້າງພຽງແຕ່ວ່າການປະຕິບັດຄຳຕັດສິນຂອງສານ ແມ່ນມີແຕ່ນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດຂອງສານໄປປະຕິບັດເທົ່ານັ້ນ, ຄວນເຂົ້າໃຈໃຫ້ກ້ວາງກ່ວານັ້ນວ່າ ການປະຕິບັດຄຳຕັດສິນຂອງສານ ແມ່ນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່ ແລະ ພົນລະເມືອງ ຊຶ່ງເປັນຂະບວນວິວັດໜຶ່ງ ທີ່ນັບຈາກການສົ່ງສຳນວນຄຳຕັດສິນ ຫຼື ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດໃຫ້ຫ້ອງການ ຫຼື ໜ່ວຍງານປະຕິບັດຄຳຕັດສິນຂອງສານ, ການສຶກສາຄົ້ນຄວ້າກຳນົດເງື່ອນ, ຂັ້ນຕອນ, ວິທີການປະຕິບັດໃຫ້ຈະແຈ້ງ ແລ້ວຮຽກຄູ່ຄວາມມາແນະນຳ, ສຶກສາອົບຮົມ, ກຳນົດ ເວລາເພື່ອປະຕິບັດຕາມກົດໝາຍ. ໃນກໍລະນີທີ່ຈຳເປັນເປັນຕົ້ນແມ່ນ ຄຳຕັດສິນທີ່ມີຄວາມຫຍຸ້ງຍາກສັບສົນຕ້ອງຂໍຄຳເຫັນຈາກອົງການປົກຄອງທ້ອງຖິ່ນຂັ້ນຂອງຕົນ ເພື່ອຄົ້ນຄວ້າຄວາມເປັນເອກະພາບໃນການປະຕິບັດ.

- ການປະຕິບັດຄຳຕັດສິນຂອງສານ ເນື້ອແທ້ແມ່ນການປະຕິບັດນະໂຍບາຍຍຸຕິທຳ ຫຼື ນະໂຍບາຍຄວາມສະເໝີພາບຕໍ່ໜ້າກົດໝາຍ. ສະນັ້ນ, "ຜູ້ໃດໄດ້ກະທຳຜິດ ຜູ້ນັ້ນຕ້ອງຖືກລົງໂທດ ຢ່າງເຂັ້ມງວດ, ຜູ້ໃດບໍ່ໄດ້ກະທຳຜິດ ແມ່ນເດັດຂາດບໍ່ໄດ້ຖືກລົງໂທດ" ບຸກຄົນ ແລະ ການຈັດຕັ້ງຕ້ອງຢູ່ພາຍໃຕ້ລັດຖະທຳມະນູນ ແລະ ກົດໝາຍ; ທຸກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານແລ້ວ ຈະຕ້ອງໄດ້ເຄົາລົບຢ່າງເຂັ້ມງວດ ແລະ ປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ[2].

---

[1] ທ່ານ ບຸນຕາ ສ.ພາບມີໄຊ, ປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011, ໜ້າ 3

[2] ເລື່ອງດຽວກັນ, ໜ້າ 5

- ການປະຕິບັດຄຳຕັດສິນຂອງສານ ແມ່ນການສະແດງອອກເຖິງຄວາມສັກສິດ ແລະ ຄວາມເຂັ້ມແຂງຂອງອຳນາດລັດພວກເຮົາ ທີ່ເປັນອຳນາດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ. ສະນັ້ນ, ພະນັກງານປະຕິບັດຄຳຕັດສິນຂອງສານ ຈະຕ້ອງມີທັດສະນະອັນ ຖືກຕ້ອງກັບທາດແທ້ຊົນຊັ້ນຂອງລັດເຮົາ, ຕ້ອງມີຄວາມນົ້ມນວນ, ຄ່ອງແຄ້ວ, ແຕ່ໜັກແໜ້ນ, ເຂັ້ມງວດ ແລະ ເດັດຂາດ. ຮູ້ປຸກລະດົມ, ສຶກສາອົບຮົມປະຊາຊົນເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານໃຫ້ໄດ້ດີ, ເປັນເອກະພາບສູງ, ຮັບປະກັນສິດ ແລະ ຜົນປະໂຫຍດຊອບທຳຂອງລັດ, ລວມໝູ່ ແລະ ພົນລະເມືອງຢ່າງແທ້ຈິງ, ຕ້ອງຫຼີກເວັ້ນທ່າທີອ່ຽງຊ້າຍ, ອ່ຽງຂວາໃນເວລາປະຕິບັດຕົວຈິງ[3].

- ການປະຕິບັດຄຳຕັດສິນຂອງສານ ແມ່ນການຕໍ່ສູ້ລະຫວ່າງອັນຜິດກົດໝາຍ ກັບອັນຖືກກົດໝາຍ, ອັນເກົ່າກັບອັນໃໝ່, ອັນຊອບທຳກັບອັນບໍ່ຊອບທຳ, ອັນແທ້ຈິງກັບອັນປອມແປງ ແລະ ທັງແມ່ນການຕໍ່ສູ້ລະຫວ່າງເຮົາກັບອິດທິກຳລັງປໍລະປັກ, ເພາະວ່າທຸກມື້ນີ້ພວກຄົນບໍ່ດີຍັງສວຍໃຊ້ຊ່ອງຫວ່າງ, ຈຸດອ່ອນໃນການປະຕິບັດກົດໝາຍຂອງພວກເຮົາ ເພື່ອກ່າວໂຈມຕີໃສ່ຮ້າຍປ້າຍສີພັກ-ລັດ ແລະ ລະບອບໃໝ່ຂອງພວກເຮົາກ່ຽວກັບບັນຫາສິດທິມະນຸດ. ດັ່ງນັ້ນ, ພະນັກງານ ແລະ ເຈົ້າໜ້າທີ່ປະຕິບັດຄຳຕັດສິນຂອງສານ ຕ້ອງມີທັດສະນະການເມືອງ ໜັກແໜ້ນ, ມີຫຼັກໝັ້ນຈຳແນກມິດ-ສັດຕູຈະແຈ້ງ, ມີຄວາມອົດທົນໝຽວແໜ້ນ, ມີຄວາມບໍລິສຸດຜຸດຜ່ອງ, ມີໄຫວພິບໃນການປະຕິບັດຕົວຈິງ, ທັງກ້າເຮັດ, ກ້າທຳ ແລະ ກ້າຮັບຜິດຊອບຕໍ່ຜົນໄດ້ຜົນເສຍໃນການປະຕິບັດຄຳຕັດສິນຂອງສານ. ຜູ້ໃດເຮັດດີ ມີຜົນງານດີເດັ່ນກໍຕ້ອງໄດ້ຮັບການຍ້ອງຍໍ, ຜູ້ໃດສວຍໃຊ້ໜ້າທີ່ ແລະ ມີຄວາມຜິດພາດບົກຜ່ອງ ກໍຕ້ອງໄດ້ຮັບການຕຳນິຕິຊົມ ຫຼື ແກ້ໄຂໃຫ້ທັນເວລາ[4].

- ການປະຕິບັດຄຳຕັດສິນຂອງສານ ແມ່ນການປະຕິບັດນະໂຍບາຍມະນຸດສະທຳຂອງພັກ. ສະນັ້ນ, ເຖິງວ່າຄູ່ຄວາມ ຫຼື ຜູ້ກະທຳຜິດຈະຕ້ອງຮັບຜິດຊອບຄວາມເສັຍຫາຍທາງແພ່ງ ຫຼື ທາງອາຍາ ທີ່ຕົນເປັນຜູ້ກໍ່ຂຶ້ນ, ແຕ່ພວກເຮົາກໍຕ້ອງເຄົາລົບສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຂົາເຈົ້າ, ບໍ່ແມ່ນວ່າຈະຖືເຂົາເຈົ້າຄືກັນກັບຜູ້ໜຶ່ງທີ່ໝົດສິດຢາກປະຕິບັດແນວໃດກໍໄດ້[5].

- ການປະຕິບັດຄຳຕັດສິນຂອງສານ ແມ່ນບັນຫາທີ່ມີຄວາມຫຍຸ້ງຍາກ, ສັບສົນ ແລະ ຍັງຈະເກີດຂຶ້ນຢ່າງເນື່ອງນິດລຽນຕິດ ຊຶ່ງເປັນບັນຫາທີ່ສົ່ງຜົນກະທົບໂດຍກົງທັງອັນດີ ຫຼື ບໍ່ດີເຖິງການນຳພາຂອງພັກ, ການຄຸ້ມຄອງຂອງລັດ ແລະ ການປະຕິບັດສິດເປັນເຈົ້າຂອງປະຊາຊົນ. ຍ້ອນແນວນັ້ນ, ຄະນະພັກທຸກຂັ້ນ, ໜ່ວຍພັກ ແລະສະມາຊິກພັກຈະຕ້ອງເພີ່ມທະວີການນຳພາ, ອຳນາດລັດທຸກຂັ້ນຈະຕ້ອງອຳນວຍຄວາມສະດວກ ແລະ ບັນດາອົງການຈັດຕັ້ງພັກ-ລັດ, ສັງຄົມຈະ

---

[3] ເລື່ອງດຽວກັນ, ໜ້າດຽວກັນ

[4] ທ່ານ ບຸນຕາ ສ.ພາບມີໄຊ, ປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011, ໜ້າ 5

[5] ເລື່ອງດຽວກັນ, ໜ້າດຽວກັນ

ຕ້ອງໃຫ້ການຮ່ວມມື ຈຶ່ງຈະເຮັດໃຫ້ການປະຕິບັດຄຳຕັດສິນຂອງສານມີຄວາມເປັນເອກະພາບ, ວ່ອງໄວ, ເຂັ້ມງວດ ແລະ ມີປະສິດທິຜົນສູງ[6].

## 2. ຄວາມໝາຍ ແລະ ຄວາມສຳຄັນຂອງການປະຕິບັດຄຳຕັດສິນຂອງສານ

ການປະຕິບັດຄຳຕັດສິນຂອງສານ ແມ່ນ ການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 (ໃໝ່) ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ ປີ 2008) ມາປະຕິບັດໃຫ້ຖືກຕ້ອງ ແລະ ປາກົດຜົນເປັນຈິງ ເພື່ອຟື້ນຟູສິດ ແລະຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງ ທີ່ຖືກລະເມີດ ຫຼື ສູນເສຍໄປ[7].

ຄຳຕັດສິນຂອງສານ ແລະ ນິຕິກຳອື່ນ ທີ່ໄດ້ກຳນົດໄວ້ໃນມາດຕາ 5 (ໃໝ່) ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ ປີ 2008) ມີຜົນບັງຄັບຕໍ່ບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຊຶ່ງຕ້ອງໄດ້ປະຕິບັດຢ່າງເຂັ້ມງວດ.

ທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ , ວິສາຫະກິດ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ ພ້ອມກັນນັ້ນກໍມີພັນທະໃຫ້ການຮ່ວມມື, ຊ່ວຍເຫຼືອອັນຈຳເປັນແກ່ພະນັກງານປະຕິບັດຄຳຕັດສິນຂອງສານ[8].

ພະນັກງານປະຕິບັດຄຳຕັດສິນຂອງສານ ແມ່ນເປັນລັດຖະກອນ ຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ໃໝ່ ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງ ປີ 2008), ເຮັດວຽກຢູ່ອົງການປະຕິບັດຄຳຕັດສິນຂອງສານ ແລະ ຮັບຜິດຊອບໂດຍກົງໃນການຄົ້ນຄວ້າ ແລະ ປະຕິບັດຄຳຕັດສິນຂອງສານ[9].

ຄຳຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ພົນລະເມືອງລາວທຸກຄົນຕ້ອງເຄົາລົບ. ບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ[10].

ພະນັກງານປະຕິບັດຄຳຕັດສິນຂອງສານ ແມ່ນລັດຖະກອນຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂ ຕາມທີ່ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ, ເຮັດວຽກຢູ່ອົງການປະຕິບັດຄຳຕັດສິນຂອງສານຮັບຜິດຊອບໂດຍກົງໃນການຄົ້ນຄວ້າ ແລະ ປະຕິບັດຄຳຕັດສິນຂອງສານ[11].

---

[6] ເລື່ອງດຽວກັນ, ໜ້າ 6

[7] ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 4/ສພຊ, ລົງວັນທີ 25 ກໍລະກົດ 2008, ມາດຕາ 2

[8] ເລື່ອງດຽວກັນ, ມາດຕາ 6

[9] ຄຳແນະນຳ ຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 445/ກຍ, ລົງວັນທີ 5 ເມສາ 2019 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການປະຕິບັດຄຳຕັດສິນຂອງສານ, ໜ້າ 2

[10] ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015, ມາດຕາ 98

### 3. ມາດຕະຖານ ແລະ ເງື່ອນໄຂຂອງພະນັກງານປະຕິບັດຄຳຕັດສິນຂອງສານ

ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້[12]:

1) ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ 25 ປີ ຂຶ້ນໄປ;

2) ມີທັດສະນະຫຼັກໝັ້ນຊຶ່ນຊົ້ນ ແລະ ມີຄວາມໜັກແໜ້ນທາງດ້ານການເມືອງ;

3) ມີຄຸນສົມບັດຈັນຍາບັນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ມີຄວາມສັດຊື່ບໍລິສຸດຕໍ່ປະເທດຊາດຕໍ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຂອງພົນລະເມືອງ, ມີມະນຸດສຳພັນດີ;

4) ມີຄວາມຮູ້, ມີນ້ຳໃຈກ້າຫານ, ອົດທົນ, ມີຄວາມສາມາດຊວນເຊື່ອໃຫ້ປະຕິບັດຄຳຕັດສິນຂອງສານ;

5) ຈົບການສຶກສາວິຊາກົດໝາຍຊັ້ນກາງຂຶ້ນໄປ ຫຼື ໄດ້ຮັບການບຳລຸງວິຊາກົດໝາຍ ແລະ ໄດ້ຮັບການຝຶກອົບຮົມ ກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງ ສານ;

6) ມີປະສົບການ ກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງສານຢ່າງໜ້ອຍ ສອງ ປີ;

7) ມີສຸຂະພາບສົມບູນດີ.

ສຳລັບ ພະນັກງານ ຜູ້ທີ່ຈະເປັນຫົວໜ້າຫ້ອງການປະຕິບັດຄຳຕັດສິນຂອງສານ ນອກຈາກມີມາດຕະຖານ, ເງື່ອນໄຂ ດັ່ງທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ຍັງຕ້ອງເປັນຜູ້ທີ່ມີແບບແຜນ ວິທີເຮັດວຽກດີ, ມີປະສົບການກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງສານ ຢ່າງໜ້ອຍ ຫ້າປີ ແລະ ມີລະດັບວິຊາສະເພາະກົດໝາຍຊັ້ນສູງຂຶ້ນໄປ; ສ່ວນຫົວໜ້າໜ່ວຍງານປະຕິບັດ ຄຳຕັດສິນຂອງສານ ຕ້ອງມີປະສົບການຢ່າງໜ້ອຍ ສາມປີ ແລະ ມີລະດັບວິຊາສະເພາະ ກົດໝາຍຊັ້ນກາງຂຶ້ນໄປ.

### 4. ສິດ ແລະ ໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານ

ພະນັກງານປະຕິບັດຄຳຕັດສິນຂອງສານ ມີສິດ ແລະ ໜ້າທີ່ ດັ່ງນີ້[13]:

1) ຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນ ເພື່ອກະກຽມປະຕິບັດ ໃນການປະຕິບັດຄຳຕັດສິນຂອງສານ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມເນື້ອໃນຄຳ ຕັດສິນຂອງສານ, ຕາມລະບຽບການ ແລະ ຂັ້ນຕອນຂອງກົດໝາຍສະບັບນີ້;

2) ສະເໜີຫົວໜ້າຫ້ອງການ ຫຼື ຫົວໜ້າໜ່ວຍງານປະຕິບັດຄຳຕັດສິນຂອງສານ ເພື່ອໃຫ້ສານທີ່ໄດ້ລົງຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍຢ່າງ ເປັນລາຍລັກອັກສອນ ກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ;

---

[11] ຄຳແນະນຳ ຂອງລັດຖະມົນຕີກະຊວງຍຸຕິທຳ ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 445/ກຍ, ລົງວັນທີ 05 ເມສາ 2019, ໜ້າ 2

[12] ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 4/ສພຊ, ລົງວັນທີ 25 ກໍລະກົດ 2008, ມາດຕາ 22

[13] ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 4/ສພຊ, ລົງວັນທີ 25 ກໍລະກົດ 2008, ມາດຕາ 21

3) ອອກໝາຍຮຽກຄູ່ຄວາມ ເພື່ອແຈ້ງເນື້ອໃນຄຳຕັດສິນຂອງສານໃຫ້ຊາບ ພ້ອມທັງແນະນຳ, ສຶກສາອົບຮົມ ແລະ ຊຸກຍູ້ໃຫ້ປະຕິບັດ;

4) ເກັບກຳຂໍ້ມູນກ່ຽວກັບຊັບສິນ ແລະ ເງື່ອນໄຂຕ່າງໆ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເພື່ອປະຕິບັດຄຳຕັດສິນຂອງສານ;

5) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດຄຳຕັດສິນຂອງສານ;

6) ສະເໜີໃຫ້ຫົວໜ້າຫ້ອງການ ຫຼື ຫົວໜ້າໜ່ວຍງານປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງໃຫ້ພາຕົວ, ຄຳສັ່ງປັບໃໝ ຫຼື ສະເໜີຕໍ່ເຈົ້າໜ້າທີ່ຕຳຫຼວດ ມີມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາຫຼົບຫຼີກການປະຕິບັດຄຳຕັດສິນຂອງ ສານນັ້ນ ບໍ່ໃຫ້ອອກນອກປະເທດ ແລະ ຄຳສັ່ງອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

7) ລາຍງານ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ທີ່ຕົນໄດ້ຮັບມອບໝາຍໃຫ້ປະຕິບັດນັ້ນ ຕໍ່ຫົວໜ້າຫ້ອງການ ຫຼື ຫົວໜ້າໜ່ວຍງານຈັດຕັ້ງ ປະຕິບັດຄຳຕັດສິນຂອງສານ;

8) ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**References:**


1. ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015;
2. ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 4/ສພຊ, ລົງວັນທີ 25 ກໍລະກົດ 2008
3. ທ່ານ ບຸນຕາ ສ.ຜາບມີໄຊ, ປື້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011;
4. ຄຳແນະນຳ ຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 445/ກຍ, ລົງວັນທີ 5 ເມສາ 2019 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການປະຕິບັດຄຳຕັດສິນຂອງສານ.